# ເງື່ອນໄຂຂອງຂອບເຂດການດຳເນີນງານປະກັນໄພກຸ່ມ ສຳຫຼັບພະນັກງານທ້ອງຖິ່ນ

## 1. ຄວາມເປັນມາ

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໄດ້ຄຳນຶງເຖິງຄວາມສຳຄັນຂອງພະນັກງານ ດັ່ງນັ້ນ ບໍລິສັດຈຶ່ງຕ້ອງການຈັດຫາສະຫວັດດີການສຳຫຼັບພະນັກງານໃນດ້ານການຄຸ້ມຄອງຊີວິດ ອຸປະຕິເຫດ ແລະ ການຮັກສາພະຍາບານ

## 2. ຈຸດປະສົງ

ບໍລິສັດ ຕ້ອງການຫາບໍລິສັດທີ່ດຳເນີນການຮັບປະກັນຊີວິດ, ອຸປະຕິເຫດ ແລະ ສຸຂະພາບ ແບບກຸ່ມໃຫ້ກັບພະນັກງານລາວ ເຊິ່ງຈະຕ້ອງນຳສະເໜີເບ້ຍປະກັນແຍກແຕ່ລະປະເພດ ດັ່ງນີ້

- ຄຸ້ມຄອງກໍລະນີເສຍຊີວິດ ແລະ ອຸປະຕິເຫດ
- ປະກັນສຸຂະພາບການປິ່ນປົວຮັກສາພະຍາບານ

## 3. ຂອບເຂດ ແລະ ໄລຍະເວລາການຄຸ້ມຄອງ

ຜູ້ນຳສະເໜີລາຄາທີ່ໄດ້ຮັບການຄັດເລືອກເປັນຄູ່ສັນຍາຕ້ອງດຳເນີນການປະກັນຊີວິດ, ອຸປະຕິເຫດ ແລະ ສຸຂະພາບກຸ່ມຂອງພະນັກງານຂອງບໍລິສັດໂດຍມີຮອບກົມມະທຳປະກັນໄພໃນຊ່ວງວັນທີ່ 01 ມັງກອນ 2025 – 31 ທັນວາ 2025 ໂດຍຈະຕ້ອງຄຸ້ມຄອງຜົນປະໂຫຍດຕາມເງື່ອນໄຂບໍ່ນ້ອຍກວ່າຄວາມຄຸ້ມຄອງທີ່ລະບຸໃນຕາລາງຂ້າງລຸ່ມ (ລວມເຖິງການຄຸ້ມຄອງຕໍ່ເນື່ອງຈາກກົມມະທຳເກົ່າທີ່ບໍລິສັດໄດ້ຈັດທຳໃນປີ 2024 ເຊິ່ງຈະສິ້ນສຸດໃນວັນທີ່ 31 ທັນວາ 2024)

| ແຜນປະກັນໄພ | ລະດັບພະນັກງານ | ກົມມະທຳປະກັນຊີວິດ | ກົມມະທຳອຸປະຕິເຫດ |
|---|---|---|---|
| ແຜນທີ່ 1 | ລະດັບຜູ້ຈັດການຝ່າຍຂຶ້ນໄປ | 2,000,000 ບາດ | 2,600,000 ບາດ |
| ແຜນທີ່ 2 | ລະດັບຜູ້ຈັດການພະແນກ | 1,000,000 ບາດ | 1,300,000 ບາດ |
| ແຜນທີ່ 3 | ລະດັບພະນັກງານເຖິງເຈົ້າໜ້າທີ່ອາວຸໂສ | 500,000 ບາດ | 900,000 ບາດ |

| ຄວາມຄຸ້ມຄອງ | ແຜນທີ່ 1<br>ລະດັບຜູ້ຈັດການຂຶ້ນໄປ | ແຜນທີ່ 2<br>ລະດັບຜູ້ຈັດການ<br>ພະແນກ | ແຜນທີ່ 3<br>ລະດັບພະນັກງານເຖິງ<br>ເຈົ້າໜ້າທີ່ |
|---|---|---|---|
| ຄ່າຫ້ອງ ແລະ ຄ່າອາຫານວັນລະ<br>(ສູງສຸດ 45 ວັນຕໍ່ການເຈັບປ່ວຍ/ອຸປະຕິເຫດແຕ່ລະຄັ້ງ) | 2,500 ບາດ | 2,000 ບາດ | 1,500 ບາດ |
| ຄ່າຫ້ອງໄອຊີຢູ<br>(ສູງສຸດ 7 ວັນຕໍ່ການເຈັບປ່ວຍ/ອຸປະຕິເຫດແຕ່ລະຄັ້ງ) | 5,000 ບາດ | 4,000 ບາດ | 3,000 ບາດ |
| ຄ່າໃຊ້ຈ່າຍ ແລະ ຄ່າບໍລິການທົ່ວໄປ<br>(ສູງສຸດ ຕໍ່ການເຈັບປ່ວຍ/ອຸປະຕິເຫດແຕ່ລະຄັ້ງ) | 40,000 ບາດ | 30,000 ບາດ | 20,000 ບາດ |
| ຄ່າທໍານຽມແພດຜ່າຕັດ<br>(ສູງສຸດ ຕໍ່ການເຈັບປ່ວຍ/ອຸປະຕິເຫດແຕ່ລະຄັ້ງ) | 50,000 ບາດ | 40,000 ບາດ | 30,000 ບາດ |
| ຄ່າທໍານຽມແພດເບິ່ງແຍງວັນລະ<br>(ສູງສຸດ 45 ວັນຕໍ່ການເຈັບປ່ວຍ/ອຸປະຕິເຫດແຕ່ລະຄັ້ງ) | 500 ບາດ | 400 ບາດ | 300 ບາດ |
| ຄ່າຮັກສາພະຍາບານອຸປະຕິເຫດສຸກເສີນ<br>(ສູງສຸດ ຕໍ່ອຸປະຕິເຫດແຕ່ລະຄັ້ງ) | 6,000 ບາດ | 5,000 ບາດ | 4,000 ບາດ |
| **ການຮັກສາພະຍາບານຜູ້ປ່ວຍນອກ** | | | |
| ການຮັກສາພະຍາບານທີ່ໂຮງໝໍ ຫຼື ຄຼີນິກ ແບບຜູ້ປ່ວຍນອກ (ສູງສຸດຕໍ່ປີກົມມະທໍາ) | 24,000 ບາດ | 24,000 ບາດ | 24,000 ບາດ |

ໝາຍເຫດ

3.1 ຈໍານວນພະນັກງານໂດຍປະມານ

a) ແຜນ 1 ຈໍານວນ 1 ຄົນ

b) ແຜນ 2 ຈໍານວນ 4 ຄົນ

c) ແຜນ 3 ຈໍານວນ 449 ຄົນ

3.2 ການຮຽກຮ້ອງຄ່າສິນໄໝທົດແທນ ຄູ່ສັນຍາຈະຕ້ອງດໍາເນີນການສໍາເລັດບໍ່ເກີນ 30 ວັນ ນັບຈາກວັນທີ່ມີການຮຽກຮ້ອງເປັນລາຍລັກອັກສອນ

3.3 ໃນກໍລະນີທີ່ບໍລິສັດ ມີຄວາມຕ້ອງການທີ່ຈະຂະຫຍາຍຄວາມຄຸ້ມຄອງໃຫ້ກັບບຸກຄົນໃນຄອບຄົວພະນັກງານ ຄູ່ສັນຍາຈະຕ້ອສະເໜີການປະກັນໃນເງື່ອນໄຂດຽວກັນ ດ້ວຍອັດຕາເບ້ຍປະກັນເທົ່າກັບ ຫຼື ຕໍ່າກວ່າທີ່ສະເໜີໃຫ້ກັບພະນັກງານບໍລິສັດ ໃນການສະເໜີລາຄາໃນຄັ້ງນີ້

## 4. ຄຸນສົມບັດຂອງຜູ້ສະເໜີລາຄາ

4.1 ຕ້ອງເປັນນິຕິບຸກຄົນທີ່ມີຜົນງານດ້ານປະກັນຊີວິດ ແລະ ປະກັນສຸຂະພາບ ໂດຍມີທຶນຈົດທະບຽນບໍ່ນ້ອຍກວ່າ 5,000,000 ບາດ

4.2 ບໍ່ເປັນຜູ້ທີ່ມີຜົນປະໂຫຍດຮ່ວມກັບຜູ້ສະເໜີລາຄາລາຍອື່ນ ແລະ/ ຫຼື ຕ້ອງບໍ່ເປັນຜູ້ມີຜົນປະໂຫຍດຮ່ວມກັນລະຫວ່າງຜູ້ສະເໜີລາຄາກັບຜູ້ຈ້າງ

4.3 ຜູ້ສະເໜີລາຄາຈະຕ້ອງບໍ່ເປັນພະນັກງານ ຫຼື ມີຄວາມສຳພັນຕາມກົດໝາຍກັບພະນັກງານຂອງບໍລິສັດ ໄຟຟ້າ ຫົງສາ ຈຳກັດ

4.4 ບໍ່ເປັນນິຕິບຸກຄົນລົ້ມລະລາຍ ຫຼື ຢູ່ລະຫວ່າງຖືກຟ້ອງລົ້ມລະລາຍ ຫຼື ຢູ່ລະຫວ່າງຂະບວນການປັບໂຄງສ້າງໜີ້ ຫຼື ຢູ່ລະຫວ່າງການຟື້ນຟູກິດຈະການ ໂດຍຜູ້ສະເໜີລາຄາເປັນຜູ້ຈັດທຳໜັງສືຮັບຮອງຢືນຢັນນິຕິບຸກຄົນ

4.5 ມີຄຸນສົມບັດ ແລະ ຍິນຍອມປະຕິບັດຕາມເງື່ອນໄຂຂອງຂອບເຂດການດຳເນີນງານ (Terms of Reference) ທັງໝົດ

5. **ຫຼັກເກນການພິຈາລະນາ**

ຄະນະກຳມະການຈັດຊື້, ຈັດຈ້າງ ຈະເປີດຊອງຂໍ້ສະເໜີ ແລະ ພິຈາລະນາຂໍ້ສະເໜີທາງດ້ານເທັກນິກ ລາຄາ ແລະ ນະໂຍບາຍການຮຽກເກັບແລະຄືນເງິນເບ້ຍປະກັນສຳລັບຄົນເຂົ້າລະຫວ່າງປີ

6. **ການສະເໜີລາຄາ**

6.1 ຜູ້ສະເໜີລາຄາ ຕ້ອງຍື່ນຊອງປະມູນຈຳນວນ 2 ຊອງ ຄື ຊອງທາງດ້ານເທັກນິກ 1 ຊອງ, ຊອງທາງດ້ານລາຄາ 1 ຊອງ.

6.2 ຊອງທາງດ້ານເທັກນິກປະກອບດ້ວຍ

a) ລາຍລະອຽດ ແລະ ປະຫວັດການເຮັດວຽກຂອງບໍລິສັດ (Company Profile), ແລະໃຫ້ແນບເອກະສານງານອ້າງອີງທີ່ຄ້າຍ ຫຼື ມີລັກສະນະຄ້າຍຄືກັບງານປະມູນ 2 ຍ້ອນຫຼັງ

b) ນະໂຍບາຍການຮຽກເກັບແລະຄືນເງິນເບ້ຍປະກັນສຳລັບຄົນເຂົ້າລະຫວ່າງປີ

c) ແຜນຜັງບຸກຄະລາກອນ ແລະ ແຜນຜັງບໍລິຫານ ແລະ ຕິດຕໍ່ປະສານງານທັງໝົດສຳຫຼັບງານປະມູນຄັ້ງນີ້

d) ຫຼັກຖານດ້ານການເງິນ (Bank Statement) ຍ້ອນຫຼັງຈາກວັນທີ່ສະເໜີລາຄາ 1 ປີ ຫຼື ເອກະສານສະນັບສະໜູນທາງດ້ານການເງິນຈາກທະນາຄານພານິດ

e) ເອກະສານ Certification ISO 9001, ISO 14001 , OHSAS 18001 ນະໂຍບາຍ ຫຼື ເທັກໂນໂລຍີທີ່ເປັນມິດກັບສິ່ງແວດລ້ອມ ແຜນການຕອບໂຕ້ເຫດສຸກເສີນຂອງຜູ້ສະເໜີລາຄາ (ຖ້າມີ)

6.3 ຊອງລາຄາ ປະກອບດ້ວຍ ໃບສະເໜີລາຄາພ້ອມລາຍລະອຽດ

6.4 ກຳນົດຍື່ນຊອງພາຍໃນວັນທີ່ **1/8/24 to 31/8/24**

6.5 ຜູ້ສະເໜີລາຄາຈະຕ້ອງຍື່ນເອກະສານປະກວດລາຄາ ໂດຍປິດຜະນຶກຊອງ ແລະ ຈ່າໜ້າຊອງ ແລະ ສົ່ງເອກະສານຕາມສະຖານທີ່ດັ່ງນີ້

- **Hongsa Power Co.,Ltd**
  NNN Building, 4th floor,Room No.D5 ; Phonsinouane Village, Boulichan Road, Sisattanak District, Vientiane Capital, Lao PDR.
  Tel + 856 21223911 / 219381 / 222482 / 222315
  Ms. Phannipa Kiatbumrung
  Division Manager-Technical Procurement
  Tel +856 20 5244 1809 e-mail: Phannipa_K@hongsapower.com Or

- **Hongsa Power Co.,Ltd**

HONGSA POWER

Phonchan Office, Phonchan Village, Hongsa District
Xayabouly province, Lao PDR
Ms. Phannipa Kiatbumrung
Division Manager-Technical Procurement
Tel +856 20 5244 1809 e-mail: Phannipa_K@hongsapower.com

### 7. ຄ່າຈ້າງ ແລະການຈ່າຍເງິນ

ບໍລິສັດຈະຊໍາລະເງິນຄ່າເບ້ຍປະກັນ ພາຍໃນ 30 ວັນ ຫຼັງຈາກຜູ້ຮັບຈ້າງໄດ້ສົ່ງມອບໃບແຈ້ງໜີ້ ແລະ ກົມມະທໍາ ຫຼື ບັດປະກັນສຸຂະພາບ ອັນມີຜົນໃຊ້ໄດ້ທັນທີຕາມສິດທິປະໂຫຍດຄວາມຄຸ້ມຄອງທີ່ບໍລິສັດໄດ້ກໍານົດໄວ້ໃຫ້.

### 8. ຂໍ້ສະຫງວນສິດ

ຫາກຜູ້ເຂົ້າຮ່ວມສະເໜີລາຄາ ຫຼື ຜູ້ທີ່ສະເໜີລາຄາຂາດຄຸນສົມບັດ ຕາມຂໍ້ກໍານົດນີ້ ບໍລິສັດມີສິດຖອນຈາກລາຍຊື່ຜູ້ມີສິດ ສະເໜີລາຄາ ຫຼື ຍົກເລີກຜູ້ໄດ້ຮັບເລືອກຈາກການສະເໜີລາຄາໄດ້ ໂດຍທາງບໍລິສັດຂໍສະຫງວນສິດການຄັດເລືອກໂດຍບໍ່ຈໍາເປັນທີ່ຈະຕ້ອງເລືອກຜູ້ທີ່ສະເໜີລາຄາຕໍ່າທີ່ສຸດ ແລະຂໍສະຫງວນສິດໃນການຕໍ່ລອງລາຄາທັງກ່ອນໜ້າ ແລະ/ຫຼື ພາຍຫຼັງງການຕັດສິນຂອງຄະນະກໍາມະການ ຜົນການຕັດສິນຂອງຄະນະກໍາມະການຖືເປັນອັນສິ້ນສຸດ ຜູ້ສະເໜີລາຄາບໍ່ມີສິດໂຕ້ແຍ້ງຄັດຄ້ານ ແລະຮຽກຮ້ອງຄ່າໃຊ້ຈ່າຍ ຫຼື ຄ່າເສຍຫາຍໃດໆ ທັງຫມົດ

### 9. ຂໍ້ຕົກລົງການວ່າຈ້າງ

ຜູ້ທີ່ໄດ້ຮັບການຄັດເລືອກຈະຕ້ອງຖືປະຕິບັດຕາມຂໍສະເໜີທີ່ສະເໜີຕໍ່ບໍລິສັດ ຫາກມີການປ່ຽນແປ່ງຂໍສະເໜີໃດໆ ຈະຕ້ອງໄດ້ຮັບຄວາມເຫັນຊອບຈາກບໍລິສັດກ່ອນ ຈື່ງຈະດໍາເນີນການ ແລະຫາກບໍລິສັດ ບໍ່ເຫັນຊອບຕໍ່ການປ່ຽນແປ່ງໃດໆ ຜູ້ສະເໜີລາຄາຈະຕ້ອງດໍາເນີນການຕາມຂໍສະເໜີທີ່ສະເໜີໄວ້

### 10. ຂໍ້ຕົກລົງຫຼັງການວ່າຈ້າງ

10.1 ຕະຫຼອດໄລຍະເວລາການຄຸ້ມຄອງກົມມະທໍາ ຄູ່ສັນຍາຈະຕ້ອງອະນຸຍາດໃຫ້ຄະນະກໍາມະການກວດຮັບສະເໜີຄວາມຄິດເຫັນ ອັນມີຜົນຕໍ່ການແກ້ໄຂປັບປຸງໃຫ້ບໍລິການ ຕະຫຼອດໄລຍະເວລາຄວາມຄຸ້ມຄອງ ຫາກການໃຫ້ບໍລິການນັ້ນບໍ່ເປັນໄປຕາມກົມມະທໍາ ຫຼື ການໃຫ້ບໍລິການບໍ່ດີເທົ່າທີ່ຄວນ

10.2 ຄູ່ສັນຍາຕ້ອງຈັດທໍາຄູ່ມືສະຫວັດດີການພະນັກງານປະກັນສຸຂະພາບແລະປະກັນໄພກຸ່ມ ເພື່ອແຈກຈ່າຍໃຫ້ພະນັກງານຂອງບໍລິສັດ

10.3 ຄູ່ສັນຍາຕ້ອງຈັດທໍາລາຍງານການຮັກສາພະຍາບານຂອງພະນັກງານ ເຊິ່ງປະກອບໄປດ້ວຍ ຂໍ້ມູນໃນການເຂົ້າຮັບການ ຮັກສາພະຍາບານເຊັ່ນ ວັນ ເວລາ ສະຖານທີ່ ແລະສາເຫດການເຂົ້າຮັກສາພະຍາບານ ເປັນຕົ້ນ

**11. ການຄວບຄຸມງານ**

ບໍລິສັດຈະແຕ່ງຕັ້ງຄະນະກຳມະການກວດຮັບການໃຫ້ບໍລິການຂອງຜູ້ທີ່ໄດ້ຮັບການຄັດເລືອກ ເປັນຜູ້ຄຸມງານ

**12. ຂໍ້ຕົກລົງຫຼັງການວ່າຈ້າງ**

ຄູ່ສັນຍາຈະຕ້ອງບໍ່ມອບເອກະສານ ແລະ ຂໍ້ມູນທີ່ໄດ້ຈັດກຽມໃຫ້ແກ່ຜູ້ໃດ ຫຼື ນຳຂໍ້ມູນຈາກການດຳເນີນງານໃນຄັ້ງນີ້ໄປໃຊ້ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກບໍລິສັດ